**19. ບໍລິສັດທີ່ຕ້ອງການອອກຈຳໜ່າຍຫຼັກຊັບໃຫ້ແກ່ມວນຊົນ ຕ້ອງປະຕິບັດເງື່ອນໄຂໃດແດ່?**

ຖ້າບໍລິສັດມີຄວາມຕ້ອງການອອກຈຳໜ່າຍຫຼັກຊັບໃຫ້ແກ່ມວນຊົນ ກ່ອນອື່ນໝົດຕ້ອງໄດ້ປະຕິບັດຕາມ **"ກົດໝາຍວ່າດ້ວຍຫຼັກຊັບ"** ແລະ ລະບຽບການທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ **"ລະບຽບການວ່າດ້ວຍການອອກຈຳໜ່າຍຮຸ້ນ"** ແລະ **"ລະບຽບການວ່າດ້ວຍການອອກຈຳໜ່າຍຮຸ້ນກູ້"** ເຊິ່ງມີລາຍລະອຽດ ດັ່ງລຸ່ມນີ້:

- ກ່ອນອື່ນໝົດ ບໍລິສັດຕ້ອງຫັນເປັນຮູບແບບບໍລິສັດມະຫາຊົນເສຍກ່ອນ ໝາຍວ່າ ບໍລິສັດຕ້ອງມີຜູ້ຖືຮຸ້ນ 100 ຄົນ ຂຶ້ນໄປ. ພ້ອມນັ້ນ, ໃນສະມາຊິກສາພາບໍລິຫານທັງໝົດ ຕ້ອງມີສະມາຊິກອິດສະລະຢ່າງໜ້ອຍ 1 ສ່ວນ 3 ແລະ ມີຄະນະກຳມະການກວດກາພາຍໃນຄັກແນ່;
- ບໍລິສັດ ຕ້ອງກະກຽມເອກະສານຕ່າງໆ ຄື: ຄຳຮ້ອງຂໍອະນຸຍາດອອກຈຳໜ່າຍຫຼັກຊັບ, ສຳເນົາໃບຢັ້ງຢືນເສຍອາກອນ, ກົດລະບຽບຂອງບໍລິສັດ, ມະຕິກອງປະຊຸມຜູ້ຖືຮຸ້ນ, ບັນຊີລາຍຊື່ຜູ້ຖືຮຸ້ນແຕ່ 1/100 ຂຶ້ນໄປ, ໜັງສືຊວນຊື້, ສັນຍາຄ້ຳປະກັນການອອກຈຳໜ່າຍຫຼັກຊັບ, ແຜນການນຳໃຊ້ທຶນ ຊຶ່ງຕ້ອງໄດ້ຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ, ມີເອກະສານລາຍງານການເງິນ ທີ່ໄດ້ຮັບການກວດສອບ ແລະ ຢັ້ງຢືນຄວາມຖືກຕ້ອງ ຈາກບໍລິສັດກວດສອບໜຶ່ງປີຄືນຫຼັງນັບແຕ່ປີຍື່ນຄຳຮ້ອງ ແລະ ປີສຸດທ້າຍກ່ອນວັນຍື່ນຄຳຮ້ອງ;
- ນອກຈາກນີ້, ຜູ້ບໍລິຫານບໍລິສັດ ທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ຕ້ອງໝັ້ນໃຈວ່າ ບໍລິສັດຕົນມີຄວາມສາມາດຮອບດ້ານໃນການດຳເນີນທຸລະກິດ ເປັນຕົ້ນແມ່ນ ຄວາມສາມາດໃນການສ້າງກຳໄລ, ບໍ່ມີໜີ້ສິນຄຸມເຄືອ, ປະຕິບັດຕາມຄຳໝັ້ນສັນຍາຕໍ່ຜູ້ຖືຮຸ້ນ ເຊັ່ນ: ເງິນປັນຜົນ, ສິດໃນການຊື້ຫຼັກຊັບໃນກໍລະນີທີ່ບໍລິສັດອອກຈຳໜ່າຍຮຸ້ນເພີ່ມ, ເປີດເຜີຍຂໍ້ມູນການດຳເນີນທຸລະກິດໃນແຕ່ລະໄລຍະ, ສິດໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງເປັນຕົ້ນ. ພ້ອມນັ້ນ, ບໍລິສັດດັ່ງກ່າວ ຕ້ອງບໍ່ປ່ຽນແປງປະເພດການດຳເນີນທຸລະກິດຕົ້ນຕໍໃນໄລຍະ ສາມປີ ຜ່ານມາ.

ທັງໝົດນັ້ນ ກໍ່ແມ່ນເງື່ອນໄຂທີ່ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ຕ້ອງໄດ້ຄຳນຶງ ແລະ ພິຈາລະນາ ເພື່ອຄວາມສຳເລັດໃນການອອກຈຳໜ່າຍຫຼັກຊັບຂອງຕົນ.